## ເຂົາເຈົ້າ...

# ເວົ້າຫຍັງແດ່?

"ຂ້າພະເຈົ້າຄິດວ່າຄົນໃດຄົນນຶ່ງຜູ້ທີ່ຢູ່ໃນສະພາບການແນວດຽວກັນກັບຂ້າພະເຈົ້າ,ຜູ້ທີ່ໄດ້ປະເຊີນໜ້ານຳບັນຫາການກຳກັບຄວບຄຸມສຸຂະພາບຈະໄດ້ຮັບຜົນປະໂຍດຈາກໂຄງການອັນນີ້.ມັນຈະຊ່ວຍບຸກຄົນໃຫ້ໄດ້ຊີວິດຂອງເຂົາເຈົ້າກັບຄືນມາເປັນຣະບຽບແລະຊ່ວຍນຳເປົ້າໝາຍແລະໃຫ້ຄວາມຫວັງ."

"ນາຍໝໍແລະພະນັກງານເບິ່ງແຍງດູແລສ່ວນຕົວຂອງຂ້າພະເຈົ້າໄດ້ໄປໝາຍນັດທ່ານໝໍຂອງຂ້າພະເຈົ້າບາງເທື່ອ,ຊຶ່ງໄດ້ຊ່ວຍຂ້າພະເຈົ້າໃຫ້ເຂົ້າໃຈວິທີການດີກວ່າເກົ່າຫລືເຮັດໃຫ້ຄຳຖາມຂອງຂ້າພະເຈົ້າບາງອັນກະຈ່າງແຈ້ງຂຶ້ນ.ຂ້າພະເຈົ້າເຊື່ອວ່າການສິ່ງຕໍ່ທີ່ນາຍໝໍໄດ້ເຮັດແລະການປິ່ນປົວທີ່ຂ້າພະເຈົ້າໄດ້ຮັບໄດ້ເຮັດໃຫ້ຄວາມຫວັງແລະສຸຂະພາບຂອງຂ້າພະເຈົ້າດີຂຶ້ນກວ່າເກົ່າ.ຂ້າພະເຈົ້າໄດ້ເຊົາສູບຢາແລະບໍ່ໄດ້ສູບຈັກກອກຕັ້ງແຕ່ເດືອນໂນເວັມເບີ."



## ການກຳກັບຄວບຄຸມການປິ່ນປົວຊຳເຮື້ອເອົາການບໍຣິການເຫລົ່ານີ້ໃຫ້

- ການຕີຣາຄາປະເມີນຜົນການປິ່ນປົວສຸຂະພາບ.
- ການວາງແຜນການກະທຳກ່ຽວກັບສຸຂະພາບສູນຣວມໃສ່ບຸກຄົນ.
- ການອູ້ມຊູທີ່ມີການປະສານງານໃນການປິ່ນປົວສຸຂະພາບແລະການບໍຣິການອື່ນໆ.
- ການສຶກສາແລະການຊີ້ນຳ.
- ຊ່ວຍທ່ານປະສານງານການປິ່ນປົວຂອງທ່ານຖ້າຫາກວ່າທ່ານໄດ້ເຂົ້າໂຮງພະຍາບານ.

## ເພື່ອຣາຍຣະອຽດເພີ້ມເຕີມ

Aging and Disability
Services Administration

1-800-422-3263

ອົງການຊ່ວຍຜູ້ເຖົ້າແຂດ

Washington State
Department of Social
& Health Services

ADSA Aging & Disability
Services Administration

DSHS 22-1476 LA (2/12)

### ມັນແມ່ນສຸຂະພາບຂອງທ່ານ

# ຄວບຄຸມ ເອົາໄວ້

ຮຽນຮູ້ຫົນທາງໃໝ່ເພື່ອຈະກຳກັບນຳສຸຂະພາບຂອງທ່ານຢູ່ເຮືອນດ້ວຍການກຳກັບຄວບຄຸມການປິ່ນປົວຊຳເຮື້ອ.



## ແມ່ນຫຍັງ...

# ການກຳກັບຄວບຄຸມນຳການປິ່ນປົວຊຳເຮື້ອ?

- ແຜນການກະທຳດ້ານສຸຂະພາບຊຶ່ງມຸ່ງໝາຍໃສ່ເປົ້າໝາຍສຸຂະພາບຂອງທ່ານແລະການຊ່ວຍເຫລືອທີ່ທ່ານອາດຈະຕ້ອງການເພື່ອຈະບັນລຸເປົ້າໝາຍເຫລົ່ານັ້ນ.
- ຄວາມໝັ້ນໃຈທີ່ດີຂຶ້ນກວ່າເກົ່າໃນການເຮັດວຽກນຳຄະນະທີມງານປິ່ນປົວສຸຂະພາບຂອງທ່ານເຊັ່ນວ່າທ່ານໝໍ, ນາຍໝໍແລະທ່ານໝໍບຳບັດ.
- ການຊ່ວຍເຫລືອເພື່ອຈະໄປຫາໝາຍນັດພົບໝໍ.
- ຄວາມໝັ້ນໃຈທີ່ເພີ້ມຂຶ້ນເພື່ອຈະຊ່ວຍເຫລືອທ່ານຄວບຄຸມນຳສຸຂະພາບຂອງທ່ານ.
- ການອູ້ມຊູເພື່ອຈະຊ່ວຍເຫລືອທ່ານທຳການປ່ຽນແປງແບບສະບັບຊີວິດທີ່ແຂງແຮງ.
- ການສຶກສາກ່ຽວກັບວ່າຈະຫລີກເວັ້ນບັນຫາຕໍ່ມານຳສຸຂະພາບຂອງທ່ານແນວໃດ.



## ການບໍລິການເຫລົ່ານີ້ແມ່ນສຳລັບຂ້າພະເຈົ້າບໍ່?

- ຜູ້ຈັດການນາຍໝໍປິ່ນປົວຂອງທ່ານຈະເຮັດວຽກນຳຜູ້ຈັດການເອກສານຂອງທ່ານແລະທ່ານໝໍຂອງທ່ານເພື່ອຈະອູ້ມຊູທ່ານໃນການເຮັດວຽກນຳຄະນະທີມງານປິ່ນປົວສຸຂະພາບຂອງທ່ານ.
- ການບໍລິການຈາກຜູ້ຈັດການນາຍໝໍປິ່ນປົວຂອງທ່ານຈະຊ່ວຍເຫລືອລຸດການຢ້ຽມຢາມໂຮງພະຍາບານແລະຫ້ອງສຸກເສີນລົງ,ແລະອູ້ມຊູສຸຂະພາບແລະການບົວຣະບັດຕົນເອງທີ່ດີຂື້ນກວ່າເກົ່າຂອງທ່ານ.

## ອັນນີ້ຈະເສັຽເງິນເທົ່າໃດ?

- ເມດີເຄດຈ່າຍເງິນໃຫ້ສຳລັບການບໍຣິການອັນນີ້.
- ທ່ານບໍ່ໄດ້ເສັຽເງິນແນວໃດ.
- ທ່ານຈະໄດ້ຮັບການບໍຣິການຂອງເມດີເຄດແນວດຽວກັນທຸກໆຢ່າງຄືກັນກັບແຕ່ກ່ອນ.

## ຂ້າພະເຈົ້າຈະຮຽນຮູ້ຫຍັງແດ່?

ຜູ້ຈັດການນາຍໝໍປິ່ນປົວຂອງທ່ານສາມາດຊ່ວຍເຫລືອທ່ານຮຽນຮູ້ເພີ້ມເຕີມອີກກ່ຽວກັບ:

- ການກຳກັບຄວບຄຸມຢາຂອງທ່ານ.
- ການກຳກັບຄວບຄຸມສະພາບສຸຂະພາບຂອງທ່ານ.
- ຊ່ວຍເຫລືອທ່ານໃຫ້ໄດ້ຮັບການບໍຣິການຢູ່ໃນຊຸມນຸມຊົນຂອງທ່ານ.

## ຂ້າພະເຈົ້າຕ້ອງໄດ້ເຮັດຫຍັງແດ່?

- ເຮັດວຽກນຳນາຍໝໍໃນຣະຫວ່າງການຢ້ຽມຢາມຫລືການໂທຫາ.
- ເຮັດແຜນການນຳສິ່ງທີ່ທ່ານຢາກເຮັດເພື່ອຈະສົ່ງເສີມສຸຂະພາບຂອງທ່ານ.

## ຂ້າພະເຈົ້າຈະເຮັດວຽກນຳໃຜ?

- ນາຍໝໍໃນຖານະເປັນຜູ້ຊີ້ນຳສຸຂະພາບຂອງທ່ານ.
- ຜູ້ຈັດການເອກສານຂອງອົງການຊ່ວຍຜູ້ເຖົ້າເຂດຂອງທ່ານ.
- ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງທ່ານແລະບຸກຄົນອື່ນໆຜູ້ທີ່ເຮັດວຽກນຳທ່ານ.
- ບຸກຄົນທີ່ທ່ານຊີ້ບອກຜູ້ທີ່ສຳຄັນຕໍ່ທ່ານລວມທັງຜູ້ປຶກສາແລະທ່ານໝໍບຳບັດສຸຂະພາບໂຣກຈິດ.

## ຂ້າພະເຈົ້າຈະຮູ້ຈັກວ່າຂ້າພະເຈົ້າມີເງື່ອນໄຂໄດ້ຮັບແນວໃດ?

- ໄດ້ຮັບເມດີເຄດສຳລັບການປິ່ນປົວຂອງທ່ານ.
- ຢູ່ໃນອັນຕະລາຍສຳລັບບັນຫາສຸຂະພາບຂອງທ່ານ.
- ໄດ້ຮັບການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນຂອງທ່ານ.